ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ລາວກຽມຄວາມພ້ອມເຂົ້າເປັນສະມາຊິກ ສະມາຄົມສະຫະພັນສິນເຊື່ອແຫ່ງອາຊີ




ການສຳມະນາ ແລະ ກອງປະຊຸມສະຫຼຸບວຽກງານສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ (ສສງ) ທົ່ວປະເທດປະຈຳປີ 2018 ໄດ້ສຳເລັດໃນວັນທີ 6 ມີນາ ທີ່ນະຄອນຫຼວງວຽງຈັນຊຶ່ງໄດ້ດຳເນີນມາເປັນເວລາ 2 ວັນພາຍໃຕ້ການສະໜັບສະໜູນຂອງອົງການສະຫະພັນສະຫະກອນໄຣໄຟເຊັນແຫ່ງປະເທດ ເຢຍລະມັນ (DGRV) ໂດຍການເປັນປະທານຂອງທ່ານ ພັນທະບູນ ໄຊຍະເພັດ ຮອງຫົວໜ້າກົມຄຸ້ມຄອງສະຖາບັນການເງິນທະນາຄານແຫ່ງ ສປປ ລາວ ເຊິ່ງມີການເຂົ້າຮ່ວມຂອງສະມາຄົມສະຫະພັນສິນເຊື່ອແຫ່ງອາຊີ (ACCU), ບັນດາ ສສງ ທົ່ວປະເທດ ແລະ ພາກສ່ວນກ່ຽວຂ້ອງ.

ໃນການສຳມະນາຄັ້ງນີ້ໄດ້ນຳສະເໜີຮ່າງພາລະບົດບາດຂອງ ສສງ ໂດຍເນັ້ນກ່ຽວກັບວິໃສທັດ, ພັນທະກິດ, ການວາງແຜນສ້າງຄວາມເຂັ້ມແຂງຂອງເຄືອຂ່າຍ; ພ້ອມນີ້, ຍັງນຳສະເໜີສະພາບລວມຂອງການສ້າງຕັ້ງສະມາຄົມຂອງປະເທດມຽນມ້າ ແລະ ສິ່ງທ້າທາຍ ແລະ ການສະເໜີສະພາບລວມຂອງການສ້າງຕັ້ງຊຸມນຸມເຄດິດຢຸນຽນຂອງໄທ ແລະ ກໍລະນີສຶກສາຂອງເຄດິດຢຸນຽນຄອງຈັນທັງໝົດທັງມວນທີ່ສຳມະນາແມ່ນເພື່ອເປັນການກະກຽມຂໍ້ມູນ ແລະ ເງື່ອນໄຂທີ່ຈະສ້າງຕັ້ງສະມາຄົມ ສສງ ຂອງ ສປປ ລາວ ເພື່ອນຳສະເໜີອົງການກ່ຽວຂ້ອງພິຈາລະນາ, ອະນຸມັດ ແລະ ກ້າວໄປເຖິງການເຂົ້າເປັນສະມາຊິກສະມາຄົມສະຫະພັນສິນເຊື່ອແຫ່ງອາຊີ ກໍ່ຄືສາກົນໃນຕໍ່ໜ້າ; ການມີສະມາຄົມ ຫຼື ເປັນສະມາຊິກຂອງສາກົນແມ່ນມີຄວາມໝາຍສຳຄັນຫຼາຍຊຶ່ງມັນຈະປົດເປື້ອງພາລະໃນການແບກຫາບຂອງພາກລັດ ແລະ ມັນຍັງເປັນການສ້າງຄວາມເຂັ້ມແຂງໃຫ້ ສສງ ຂອງລາວຕື່ມອີກ ທັງນີ້ກໍ່ເພື່ອແນໃສ່ປະກອບສ່ວນແຫຼ່ງທຶນເຂົ້າໃນການແກ້ໄຂຄວາມຫຍຸ້ງຍາກຂອງຄອບຄົວ, ຂອງຊຸມຊົນໄດ້ໃນລະດັບໃດໜຶ່ງຕື່ມອີກ.




ສຳລັບກອງປະຊຸມສະຫຼູບວຽກງານ ສສງ ຄັ້ງນີ້ ກໍ່ຍັງໄດ້ນຳສະເໜີການສະຫຼຸບສະພາບການຄຸ້ມຄອງ ແລະ ສົ່ງເສີມວຽກງານ ສສງ; ວຽກງານປະຊາສຶກສາທາງດ້ານການເງິນ; ການນຳສະເໜີວຽກງານການເຄື່ອນໄຫວຮ່ວມກັບທະນາຄານແຫ່ງ ສປປ ລາວ ໃນໄລຍະຜ່ານມາ; ໃນຂະນະດຽວກັນກໍ່ໄດ້ມີການນຳສະເໜີຈາກ ສສງ ມິດຕະພາບໃນຫົວຂໍ້: ການຂະຫຍາຍສິນເຊື່ອ ແລະ ການບໍລິຫານໜີ້ຊັກຊ້າ; ສສງ ຄອງຈັນໄດ້ນຳສະເໜີການບໍລິຫານ ແລະ ການຄວບຄຸມພາຍໃນ; ສສງ ຫົວແຊ ສະເໜີກ່ຽວກັບການບັນຊີ ແລະ ການລາຍງານ ແລະ ສສງ ເມືອງ ຜາໄຊ ແຂວງ ຊຽງຂວາງ ໄດ້ນຳສະເໜີການຂະຫຍາຍສະມາຊິກ ແລະ ລະດົມຮຸ້ນ; ຈາກນັ້ນ, ໃນເວລາຕໍ່ມາກໍ່ມີການມອບໃບຍ້ອງຍໍ ແລະ ໃບຊົມເຊີຍຂອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ໃຫ້ແກ່ ສສງ ທີ່ດີເດັ່ນໃນການບໍລິຫານ, ການຈັດການ ແລະ ການບໍລິການລູກຄ້າ ແລະ ປະຊາຊົນບັນດາເຜົ່າໃນທົ່ວປະເທດ.

ໃນປີ 2018 ຜ່ານມາ ສປປ ລາວ ມີ ສສງ ທີ່ຢູ່ໃນການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ ທັງໝົດ 27 ແຫ່ງ; ມີສະຫະກອນອອມຊັບ 2 ແຫ່ງຊຶ່ງມີການເຄື່ອນໄຫວ ແລະ ດຳເນີນງານມີທ່າອ່ຽງດີຂຶ້ນກ່ວາປີ 2017 ທັງດ້ານປະລິມານ ແລະ ຄຸນນະພາບ, ສະແດງອອກ ຄື: ຊັບສິນເພີ່ມຂຶ້ນ 18,13%; ໜີ້ສິນເພີ່ມຂຶ້ນ 11,37%; ທຶນທັງໝົດເພີ່ມຂຶ້ນ 33,00%; ກຳໄລເພີ່ມຂຶ້ນ 50,77%; ເງິນຝາກເພີ່ມຂຶ້ນ 11,44%; ເງິນກູ້ ເພີ່ມຂຶ້ນ 21,52%; ໜີ້ຊັກຊ້າເພີ່ມຂຶ້ນ 24,40%; ຈຳນວນສະມາຊິກເພີ່ມຂຶ້ນ 6,43%; ຈຳນວນພະນັກງານຂອງ ສສງ ເພີ່ມຂຶ້ນ 9,05% ແລະ ໃນປີ 2018 ຜ່ານມາສາມາດມີ ສສງ ດີເດັ່ນຄື: ສສງ ມິດຕະພາບ, ສສງ ຄອງຈັນ; ສສງ ຫົວແຊ ແລະ ສສງ ເມືອງຜາໄຊ ແຂວງ ຊຽງຂວາງ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ